# ປັດໄຈທີ່ມີຜົນຕໍ່ປະສິດທິພາບໃນການດຳເນີນງານຂອງທະນາຄານທຸລະກິດໃນ ສປປ ລາວ

**ຜູ້ຂຽນ: ສະຫວັນດວງຈິດ ແສງເດືອນ, ອຳນວຍ ວົງດອນແດງ[1], ວຽງໄຊ ສອນມະນີ, ສີສະຫວັນ ແປງມະນີວົງ, ບຸນທະວີ ສີດາພອນ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

[1] ***ຜູ້ຮັບຜິດຊອບ:*** *ອຳນວຍ ວົງດອນແດງ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

*ເບີໂທ: +856 2095286490*

*E-mail:* vongdonedaeng2015@gmail.com

ຜົນການຄົ້ນຄວ້າກ່ຽວກັບປັດໄຈທີ່ມີຜົນຕໍ່ປະສິດທິພາບໃນການດຳເນີນງານຂອງທະນາຄານທຸລະກິດ ໃນ ສປປ ລາວ ເຊິ່ງມີຈຸດປະສົງໃນການຄົ້ນຄວ້າ 2 ຈຸດປະສົງຄື: 1. ສະພາບລວມຂອງການປ່ອຍສິນເຊື່ອຂອງທະນາຄານທຸລະກິດ ແລະ ປະເມີນປະສິດທິພາບໃນການປ່ອຍສິນເຊື່ອຂອງທະນາຄານທຸລະກິດໃນ ສປປ ລາວ ແຕ່ປີ 2015 ຫາ 2021 ແລະ 2. ສຶກສາປັດໄຈທີ່ມີຜົນຕໍ່ປະສິດທິພາບການດຳເນີນງານຂອງທະນາຄານທຸລະກິດໃນ ສປປ ລາວ. ໃນການວິເຄາະຫາຄ່າປະສິດທິພາບໃຊ້ວິທີ Data Envelopment Analysis (DEA). ວິທີການແກ້ໄຂຜົນກະທົບແບບ Fixed Regression Model (FEM), ໄລຍະເວລາທີ່ນຳມາວິເຄາະແມ່ນເລີ່ມແຕ່ໄຕມາດທີ 1 ປີ 2015 ຫາ ໄຕມາດທີ 4 ປີ 2021 ລວມທັງໝົດ 7 ປີ, ທັງໝົດ 30 ທະນາຄານ ແລະ ຂໍ້ມູນທີ່ນຳມາໃຊ້ເຂົ້າໃນການວິເຄາະລວມທັງໝົດ 840 ຂໍ້ມູນ.

ຜົນການດຳເນີນງານຂອງທະນາຄານທຸລະກິດນັບແຕ່ປີ 2015 ຫາ 2021 ເຫັນວ່າ: ລາຍຮັບສຸດທິຂອງ ທະນາຄານທຸລະກິດທັງໝົດ 30 ທະນາຄານ ເຫັນວ່າລາຍຮັບສຸດທິຫຼາຍກວ່າໝູ່ແມ່ນໄຕມາທີ 4 ປີ 2021 ເທົ່າກັບ 353,656 ລ້ານກີບ, ເພີ່ມຂຶ້ນເທົ່າກັບ 303.21 ສ່ວນຮ້ອຍ, ລາຍຮັບດອກເບ້ຍຫຼາຍກວ່າໝູ່ໃນປີ 2021 ມີມູນຄ່າເທົ່າກັບ 1,931,564.00 ລ້ານກີບ, ລາຍຈ່າຍດອກເບ້ຍຫຼາຍກວ່າໝູ່ແມ່ນໃນໄຕມາດທີ 4 ປີ 2021 ເທົ່າກັບ 1,000,577 ລ້ານກີບ, ປະລິມານເງິນປ່ອຍກູ້ຫຼາຍກວ່າໝູ່ແມ່ນໃນປີ 2021 ເທົ່າກັບ 66,112,615 ລ້ານກີບ ຫຼື ເທົ່າກັບອັດຕາສ່ວນ 262.53 ສ່ວນຮ້ອຍ, ລາຍຈ່າຍໃນການດຳເນີນງານຫຼາຍກວ່າໝູ່ແມ່ນໃນປີ 2020 ເຊິ່ງມີມູນຄ່າເທົ່າກັບ 1,626,453.43 ລ້ານກີບ ແລະ ປະລິມານເງິນຝາກຂອງສູງກວ່າໝູ່ແມ່ນໃນປີ 2020 ປະລິມານເງິນຮັບຝາກເທົ່າກັບ 29,061,011.75 ລ້ານກີບ.

ສ່ວນຄະແນນຄ່າຄວາມມີປະສິດທິພາບໃນການດຳເນີນງານຂອງທະນາຄານທຸລະກິດທັງໝົດ 30 ທະນາຄານ ເຫັນວ່າ ມີຄະແນນຄ່າຄວາມມີປະສິດທິພາບໂດຍສະເລ່ຍເທົ່າກັບ 0.966 ຄະແນນ, ກ່ຽວກັບຜົນໄດ້ຮັບຈາກປັດໄຈທີ່ມີຜົນຕໍ່ປະສິດທິພາບໃນການດຳເນີນງານຂອງທະນາຄານທຸລະກິດໃນ ສປປ ລາວ ປະກອບດ້ວຍ: ຊັບສິນລວມຂອງທະນາຄານ ($LNA_{ij}$): ມີການພົວພັນໃນທິດທາງດຽວກັນກັບປະສິດທິພາບໃນການດຳເນີນງານ, ປະລິມານເງິນຮັບຝາກ ($DTA_{ij}$): ມີການພົວພັນໃນທິດທາງດຽວກັນກັບປະສິດທິພາບໃນການດຳເນີນງານ ແລະ ປັດໄຈອື່ນໆທີ່ບໍ່ມີຜົນຕໍ່ປະສິດທິພາບໃນການດຳເນີນງານຂອງທະນາຄານທຸລະກິດໃນ ສປປ ລາວປະກອບດ້ວຍ: ປະລິມານເງິນປ່ອຍກູ້ ($LTD_{ij}$), ອັດຕາເງິນເຟີ້ ($Inflation_{ij}$), ອັດຕາການຈະເລີນເຕີບໂຕທາງດ້ານເສດຖະກິດ ($growth_{ij}$) ແລະ ອັດຕາສ່ວນເງິນລົງທຶນໃສ່ຊັບສິນບັດຄົງທີ່ ($FA_{ij}$).

**Keywords**: ຄ່າປະສິດທິພາບ, ການດຳເນີນງານຂອງທະນາຄານທຸລະກິດ.

# Factors affecting credit performance of Commercial Banks in Lao PDR

**Authors: Savanhduangchit SENGDEUN, Amnuay VONGDONEDAENG[1], Viengxai SONEMANY, Sisawanh PENGMANIVONG, Bounthavy SYDAPHONE**

*Banking Institute, Bank of the Lao PDR*

[1]***Correspondence:*** *Amnuay VONGDONEDAENG, Banking Institute, Bank of the Lao PDR*

*. Tel: +856 2095286490*

*E-mail: vongdonedaeng2015@gmail.com*

Research results on the factors that affect the efficiency of commercial banks in Lao PDR which aims to research 2 objectives: 1. Overview of commercial bank credit and evaluate the credit performance of commercial banks in Lao PDR from 2015 to 2021 and 2. Study the factors that affect the performance of commercial banks in Lao PDR. In the analysis to find the efficiency value, use VT Data Envelopment Analysis (DEA). Fixed Regression Model (FEM), The period analyzed is from the 1st quarter of 2015 to the 4th quarter of 2021 including 7 years, 30 banks and the data used in the analysis totaling 840 data.

Business Bank's performance from 2015 to 2021 shows that: The net income of all 30 commercial banks saw that the highest income was the fourth quarter of 2021 equal to 353,656 million kip, an increase of 303.21 percent, The highest interest income in 2021 is equal to 1,931,564 million kip, The highest interest expense is in the fourth quarter of 2021, equal to 1,000,577 million kip, The largest amount of loans in 2021 is equal to 66,112,615 million kip or equal to the ratio of 262.53 percent, The highest operating expenditure is in 2020, which is equal to 1,626,453.43 million kip and the highest amount of deposits is in 2020, the amount of deposit is equal to 29,061,011.75 million kip.

As for the operational efficiency score of all 30 commercial banks, the average efficiency score is 0.966 points, about the results of the factors that affect the efficiency of business banks in Lao PDR include: Bank's Total Assets (LNAij): have a positive relationship with operational efficiency, deposit amount (DTAij): have a positive relationship with operational efficiency and Other factors that do not affect the performance of commercial banks in Lao PDR include: amount of loans (LTDij), inflation rate (Inflationij), economic growth rate (growthij) and fixed asset investment ratio (FAij).

**Keywords**: Data Envelopment Analysis (DEA), Commercial banking operations